ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 534 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 14 / 08 / 25

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິຕົກລົງ ຂອງສະພາແຫ່ງຊາດ ສະບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ແຈ້ງການ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 221/ຄຈສພ, ລົງວັນທີ 13 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 289/ຄຈສພ, ລົງວັນທີ 09 ກໍລະກົດ 2025.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ ຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການ ຂອງລັດ ໃນການຄຸ້ມຄອງ, ຊຸກຍູ້ສົ່ງເສີມ ແລະ ພັດທະນາ ວຽກງານກະສິກຳ, ປ່າໄມ້, ພັດທະນາຊົນນະບົດ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ, ການຄຸ້ມຄອງ ແລະ ປົກປັກຮັກສາທຳມະຊາດ, ສິ່ງແວດລ້ອມ ຕາມທິດຍືນຍົງ ແລະ ສີຂຽວ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກສ"** ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານກະສິກຳ, ການປຸງແຕ່ງກະສິກຳຂັ້ນຕົ້ນ, ການພັດທະນາຊົນນະບົດ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງວຽກງານອຸຕຸນິຍົມ, ອຸທົກກະສາດ; ຄົ້ນຄວ້າ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ຕາມທິດຫັນເປັນທັນສະໄໝ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີໜ້າທີ່ ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ, ມະຕິ ແລະ ນິຕິກຳ ຂອງລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບວຽກງານກະສິກຳ ແລະ ສິ່ງແວດລ້ອມ;
2. ເຜີຍແຜ່, ເຊື່ອມຊຶມ ແລະ ຄົ້ນຄວ້າຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ, ນະໂຍບາຍ, ແຜນຍຸດທະສາດ, ມະຕິຕົກລົງ ຂອງລັດຖະບານ ກ່ຽວກັບວຽກງານກະສິກຳ ແລະ ສິ່ງແວດລ້ອມ ມາເປັນແຜນການ, ແຜນງານ, ໂຄງການລະອຽດ ຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າ ສ້າງ, ປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍສຳລັບວຽກງານຄຸ້ມຄອງ ຂອງຂະແໜງການຕົນ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
4. ຊຸກຍູ້, ສົ່ງເສີມ ການຜະລິດສະບຽງອາຫານໃຫ້ພຽງພໍ ເພື່ອຄໍ້າປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ; ມີວັດຖຸດິບປ້ອນໂຮງງານປຸງແຕ່ງ; ຍູ້ແຮງການຜະລິດກະສິກຳ ແລະ ປ່າໄມ້ ເປັນສິນຄ້າແບບຫຼາກຫຼາຍ ຕາມທ່າແຮງທີ່ໄດ້ປຽບຂອງທ້ອງຖິ່ນ ແລະ ເຂດແຄວ້ນ ໂດຍມີການກຳນົດເຂດການຜະລິດ ຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ; ຊຸກຍູ້ການພັດທະນາ ວິສາຫະກິດຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າສົດ, ຊີວະພາບ, ສະອາດ, ປອດໄພ, ຜະລິດສິນຄ້າ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ໂດຍສອດຄ່ອງກັບມາດຕະຖານສຸຂານາໄມ ພືດ ແລະ ສັດ ຂອງປະເທດຄູ່ຄ້າ;
5. ຄົ້ນຄວ້າ, ກຳນົດ ມາດຕະຖານລວມ ດ້ານເຕັກນິກ ແລະ ຄຸນນະພາບ ກ່ຽວກັບຜະລິດຕະພັນກະສິກຳ, ປ່າໄມ້, ປັດໄຈການຜະລິດ, ອຸປະກອນ ແລະ ກົນຈັກກະສິກຳ, ໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້; ສ້າງ ແລະ ປັບປຸງພື້ນຖານໂຄງລ່າງ ດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນຂະບວນການວິໄຈ, ທົດລອງຢັ້ງຢືນມາດຕະຖານສິນຄ້າກະສິກຳ ແລະ ປ່າໄມ້ ຮັບໃຊ້ພາຍໃນ, ການນຳເຂົ້າ ແລະ ສົ່ງອອກ; ຊຸກຍູ້ສົ່ງເສີມການພັດທະນາ ເຂດ ແລະ ນິຄົມອຸດສາຫະກຳ-ກະສິກຳ, ຕະຫຼາດຂາຍຍົກ-ຂາຍຍ່ອຍ ຜົນຜະລິດກະສິກຳ ແລະ ປ່າໄມ້ ຕາມກົດໝາຍ ແລະ ລະບຽບການ;
6. ຄຸ້ມຄອງ, ກວດກາ, ຢັ້ງຢືນ ກະສິກຳສະອາດ, ສຸຂານາໄມພືດ ແລະ ສັດ ໃນການນຳເຂົ້າ, ສົ່ງອອກຜະລິດຕະພັນກະສິກຳ, ປ່າໄມ້ ແລະ ເຄື່ອງປ່າຂອງດົງ ລວມທັງຄຸ້ມຄອງ ການນຳເຂົ້າ, ສົ່ງອອກປັດໄຈການຜະລິດ ເປັນຕົ້ນ ຝຸ່ນ, ຢາປາບສັດຕູພືດ, ເຄມີກະສິກຳ, ຢາປົວພະຍາດສັດ, ວັກຊີນ, ອາຫານສັດ, ແນວພັນພືດ, ແນວພັນສັດ, ແນວພັນປາ, ກົນຈັກ ແລະ ອຸປະກອນການຜະລິດກະສິກຳ ຕາມກົດໝາຍ ແລະ ລະບຽບການ; ເອື້ອອຳນວຍຄວາມສະດວກ ໃນການສົ່ງຜ່ານສິນຄ້າກະສິກຳ ແລະ ປ່າໄມ້ ຈາກປະເທດຕົ້ນທາງຫາປະເທດປາຍທາງ ຕາມກົດໝາຍ ແລະ ລະບຽບການ;
7. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານອຸດສາຫະກຳປຸງແຕ່ງ ຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ; ລະບົບໂລຈິສະຕິກ ຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ ໃຫ້ເປັນລະບົບຕ່ອງໂສ້ ໃນການຄຸ້ມຄອງກຳນົດແຜນການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ຢ່າງກົມກຽວ;
8. ຄຸ້ມຄອງການນຳໃຊ້ສານເຄມີ ເຂົ້າໃນການຜະລິດກະສິກຳ ເປັນຕົ້ນ ຝຸ່ນເຄມີ, ຢາປາບສັດຕູພືດ, ຢາຂ້າຫຍ້າ, ສານກະຕຸ້ນ, ການຕັດແຕ່ງພັນທຸກຳ (GMO) ແລະ ສານເຄມີອື່ນໆ ໃຫ້ໄດ້ຕາມມາດຕະຖານກະສິກຳສະອາດ;

9. ຄຸ້ມຄອງ ແລະ ພັດທະນາ ລະບົບຊົນລະປະທານຫຼາຍຮູບແບບ ໂດຍນຳໃຊ້ນ້ຳຜິວດິນ ແລະ ນ້ຳໃຕ້ດິນ, ນຳໃຊ້ພະລັງງານທົດແທນເຂົ້າໃນການສູບນ້ຳໃນບ່ອນທີ່ມີເງື່ອນໄຂ ແລະ ສ້າງໂຄງລ່າງລະບົບປ້ອງກັນ-ລະບາຍນ້ຳ ເພື່ອຕ້ານແລ້ງ, ຕ້ານຖ້ວມ ແລະ ນຳໃຊ້ນ້ຳຊົນລະປະທານ ໃຫ້ມີປະສິດທິພາບສູງ ຕິດພັນກັບການພັດທະນາຊົນລະກະເສດ ຕາມທິດຫັນເປັນອຸດສາຫະກຳ, ທັນສະໄໝ ແລະ ຍືນຍົງ;

10. ຊຸກຍູ້, ສົ່ງເສີມ, ຖ່າຍທອດ ເຕັກນິກ, ເຕັກໂນໂລຊີ ກ່ຽວກັບການປູກ, ການລ້ຽງ ແລະ ການປຸງແຕ່ງ; ຈັດຕັ້ງການຜະລິດ ຂອງຊາວກະສິກອນ ເປັນກຸ່ມ ແລະ ສະຫະກອນ; ຈັດຝຶກອົບຮົມທັກສະກະສິກຳສະ ໄ ໝໃໝ່ ໃຫ້ບຸກຄົນ, ສະມາຊິກກຸ່ມ ໃນການບໍລິຫານຈັດການ, ການເຂົ້າເຖິງຕະຫຼາດ ແລະ ແຫຼ່ງທຶນ, ການນຳໃຊ້ກົນຈັກ, ການສະໜັບສະໜູນພື້ນຖານໂຄງລ່າງ ດ້ານການປຸງແຕ່ງ, ຫຸ້ມຫໍ່, ການເກັບຮັກສາ, ການຕະຫຼາດໃນບ່ອນທີ່ມີຄວາມຈຳເປັນ;

11. ຊຸກຍູ້ສູນບໍລິການເຕັກນິກກະສິກຳ ທີ່ມີຢູ່ໃນທົ່ວປະເທດ ໃຫ້ເຂັ້ມແຂງ ຮັບປະກັນການເຄື່ອນໄຫວໃຫ້ມີປະສິດທິພາບ ດ້ວຍການປະກອບທຶນ, ວິຊາການທີ່ມີຄວາມຮູ້ຄວາມສາມາດ, ປະກອບວັດຖຸ-ເຕັກນິກ ແລະ ເຕັກໂນໂລຊີທັນສະໄໝ ໃຫ້ແກ່ສູນຕ່າງໆ ເພື່ອຖ່າຍທອດບົດຮຽນ, ເຕັກໂນໂລຊີ ການປູກ-ການລ້ຽງ ແລະ ທັງເປັນບ່ອນສາທິດ ໃຫ້ແກ່ຊາວກະສິກອນ, ຜູ້ປະກອບການ, ນັກສຶກສາ ແລະ ສັງຄົມ;

12. ສຳຫຼວດ-ວັດແທກ, ສ້າງແຜນທີ່, ຈັດສັນ ແລະ ກຳນົດເຂດການນຳໃຊ້, ການຂຶ້ນທະບຽນອອກໃບຕາດິນ ອອກໃບຢັ້ງຢືນການນຳໃຊ້ທີ່ດິນ, ການພັດທະນາທີ່ດິນ, ການຫັນປ່ຽນປະເພດທີ່ດິນ, ການສ້າງສຳມະໂນທີ່ດິນ, ປະເມີນລາຄາທີ່ດິນ, ຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ ລວມທັງການຂຶ້ນທະບຽນທີ່ດິນ ເພື່ອປຸກສ້າງຄອນໂດມິນຽມ; ພັດທະນາທີ່ດິນແຕ່ລະປະເພດ ເປັນຕົ້ນ ດິນກະສິກຳ, ດິນປ່າໄມ້ ແລະ ດິນປະເພດອື່ນ, ດຳເນີນການປັກຫຼັກໝາຍ ເຂດທີ່ດິນສະຫງວນ, ອະນຸລັກດິນທີ່ຈະນຳໃຊ້ ແລະ ພັດທະນາ; ເປັນໃຈກາງປະສານສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຊຸກຍູ້, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ການຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ; ການກວດກາການນຳໃຊ້ທີ່ດິນ ແລະ ທຸລະກຳ ກ່ຽວກັບທີ່ດິນ ຕາມກົດໝາຍກຳນົດໄວ້;

13. ຄຸ້ມຄອງປົກປັກຮັກສາປ່າໄມ້ ຕາມ 3 ລະບົບປະເພດປ່າ (ປ່າສະຫງວນແຫ່ງຊາດ ຫຼື ອຸທິຍານແຫ່ງຊາດ, ປ່າປ້ອງກັນແຫ່ງຊາດ ແລະ ປ່າຜະລິດ), ກຳນົດມາດຕະການ ເພື່ອຟື້ນຟູປ່າໄມ້ ແລະ ປົກປັກຮັກສາແຫຼ່ງນ້ຳ-ຄວາມສົມດູນ ຂອງລະບົບນິເວດ ແລະ ຊີວະນາໆພັນ; ສົ່ງເສີມການຟື້ນຟູບູລະນະປ່າໄມ້ ແລະ ການປູກໄມ້ເປັນສິນຄ້າຕິດພັນກັບການສົ່ງເສີມການທ່ອງທ່ຽວທຳມະຊາດ, ການພັດທະນາກະສິກຳ, ປ່າໄມ້ ແລະ ການລ້ຽງສັດ ແບບປະສົມປະສານ, ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ;

14. ພັດທະນາພື້ນຖານໂຄງລ່າງ ທີ່ຕິດພັນກັບວຽກງານກະສິກຳ ໃນເຂດຊົນນະບົດ, ພັດທະນາອາຊີບ ແລະ ປັບປຸງລະບົບການຈັດຕັ້ງການຜະລິດ ເພື່ອສ້າງລາຍຮັບປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກໃຫ້ແກ່ຊາວຊົນນະບົດ; ເປັນໃຈກາງປະສານງານກັບບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ໃນການພັດທະນາຊົນນະບົດຮອບດ້ານ, ຄົ້ນຄວ້າ, ກຳນົດຈຸດສຸມ ພັດທະນາຊົນນະບົດ ໃນແຕ່ລະໄລຍະ ຕາມພາລະບົດບາດ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ, ຄົ້ນຄວ້າກຳນົດມາດຕະຖານ, ຕົວຊີ້ວັດແຫ່ງຊາດ ກ່ຽວກັບວຽກງານພັດທະນາຊົນນະບົດໃໝ່ ຕາມທິດສາມສ້າງ ຕິດພັນກັບການຊຸກຍູ້, ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;

15. ສົມທົບພາກສ່ວນກ່ຽວຂ້ອງ ໃນການລະດົມທຶນ ແລະ ສະໜອງທຶນ ໃຫ້ແກ່ການຈັດຕັ້ງປະຕິບັດບັນດາໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ວາງມາດຕະການໃນການຄຸ້ມຄອງ, ນຳໃຊ້ກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ການປ່ອຍສິນເຊື່ອ ຂອງທະນາຄານ ແລະ ສະຖາບັນການເງິນ ທີ່

ກ່ຽວຂ້ອງ ພ້ອມທັງ ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກໍານົດໄວ້;

16. ຄົ້ນຄວ້າ, ທົດລອງ, ວິໄຈ ດ້ານວິທະຍາສາດເຕັກນິກກະສິກໍາ ແລະ ສິ່ງແວດລ້ອມ; ປັບປຸງ, ເລືອກເຟັ້ນ ແລະ ຂະຫຍາຍ ແນວພັນພືດ, ໄມ້, ສັດ ແລະ ສັດນໍ້າ ຕິດພັນກັບການຜະລິດເປັນສິນຄ້າ; ເຜີຍແຜ່, ແນະນໍາ ການນໍາໃຊ້ຜົນສໍາເລັດ ຂອງການຄົ້ນຄວ້າ, ທົດລອງ ໄປສູ່ສັງຄົມ; ຄຸ້ມຄອງແຫຼ່ງພັນທຸກໍາພືດ, ສັດ ຂອງ ສປປ ລາວ ຕາມທີ່ກົດໝາຍກໍານົດ ແລະ ຄຸ້ມຄອງປົກປ້ອງລິຂະສິດຜົນ ຂອງການຄົ້ນຄວ້າທົດລອງ; ພັດທະນາ ແລະ ປັບປຸງໂຄງລ່າງກ່ຽວກັບການຄົ້ນຄວ້າທົດລອງທາງດ້ານວິທະຍາສາດໃຫ້ເຂັ້ມແຂງ;
17. ຊຸກຍູ້, ສົ່ງເສີມ, ເອື້ອອໍານວຍຄວາມສະດວກ ໃຫ້ແກ່ການລົງທຶນ ຂອງຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເປັນຂະບວນການແຂງແຮງ, ຄຸ້ມຄອງ ແລະ ກະຕຸກຊຸກຍູ້ ບັນດາລັດວິສາຫະກິດ ທີ່ຂຶ້ນກັບກະຊວງກະສິກໍາ ແລະ ສິ່ງແວດລ້ອມ; ພົວພັນຮ່ວມມື, ຂົນຂວາຍຍາດແຍ່ງການຊ່ວຍເຫຼືອ ແລະ ການລົງທຶນ ຈາກພາຍໃນ ແລະ ຕ່າງປະເທດ ບົນພື້ນຖານກົດໝາຍ ພ້ອມທັງປະຕິບັດພັນທະ ຕໍ່ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຢ່າງຕັ້ງໜ້າ ເພື່ອເປັນກໍາລັງແຮງປະກອບສ່ວນເຂົ້າໃນການພັດທະນາວຽກງານກະສິກໍາ, ສິ່ງແວດລ້ອມ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;
18. ຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າ ເປັນຕົ້ນ ການຜັນຂະຫຍາຍຍຸດທະສາດການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າ, ການສ້າງ ແລະ ປັບປຸງແຜນການຄຸ້ມຄອງອ່າງຮັບນໍ້າ, ອ່າງເກັບນໍ້າ ຕາມແຕ່ລະໄລຍະ ແລະ ການຄຸ້ມຄອງການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ ຕາມກົດໝາຍກໍານົດໄວ້;
19. ກໍານົດມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ ແລະ ມາດຕະຖານຄວບຄຸມມົນລະພິດ, ແຜນການຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ, ຄຸ້ມຄອງສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ; ສົ່ງເສີມການສ້າງຈິດສໍານຶກໃນການປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍກໍານົດ; ການຄວບຄຸມ, ແກ້ໄຂບັນຫາມົນລະພິດ, ສິ່ງເສດເຫຼືອ, ການປ່ອຍມົນລະພິດ ແລະ ສິ່ງລົບກວນຕ່າງໆ;
20. ສຶກສາຄົ້ນຄວ້າ, ວິເຄາະຂໍ້ມູນຂ່າວສານ ກ່ຽວກັບການປ່ຽນແປງດິນຟ້າອາກາດ; ເປັນເຈົ້າການໃນການເຊື່ອມສານວຽກງານປ້ອງກັນ, ການກຽມພ້ອມ ແລະ ການຫຼຸດຜ່ອນຄວາມສ່ຽງໄພພິບັດເຂົ້າໃນແຜນງານ, ແຜນການ ຂອງຂະແໜງການ ແລະ ເປັນໃຈກາງປະສານງານໃນວຽກງານຫຼຸດຜ່ອນຄວາມສ່ຽງ, ສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ; ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານສິນເຊື່ອກາກບອນໃນແຕ່ລະຂົງເຂດ ໂດຍສອດຄ່ອງກັບມາດຕະຖານຫຼຸດຜ່ອນທາດອາຍເຮືອນແກ້ວ;
21. ຕິດຕາມ, ກວດກາ ການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ມົນລະພິດ, ໂຄງການລົງທຶນ ແລະ ກິດຈະການຕ່າງໆ; ກວດກາ ແລະ ສະກັດກັ້ນ ການບຸກລຸກປ່າໄມ້, ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້, ການຄ້າໄມ້, ສັດນໍ້າ-ສັດປ່າ, ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ທີ່ຜິດກົດໝາຍ ເພື່ອດໍາເນີນຄະດີຕໍ່ຜູ້ກະທໍາຜິດ ລວມທັງການຫັນປ່ຽນທີ່ດິນປ່າໄມ້, ທີ່ດິນກະສິກໍາ ແລະ ທີ່ດິນເຂດຊົນລະປະທານ ຕາມກົດໝາຍ ແລະ ລະບຽບການກໍານົດໄວ້;
22. ປັບປຸງ, ສ້າງ ແລະ ຂະຫຍາຍ ຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດ ໃຫ້ທັນສະໄໝ; ນໍາໃຊ້ ຕາໜ່າງສະຖານີອຸຕຸການບິນ, ຕາໜ່າງສະຖານນີອຸຕຸກະເສດ; ຍົກລະດັບສະຖານີຕິດຕາມແຜ່ນດິນໄຫວ ເພື່ອເຮັດການບໍລິການຂໍ້ມູນຂ່າວສານ ລວມທັງການເຮັດພະຍາກອນ ແລະ ການແຈ້ງເຕືອນໄພລ່ວງໜ້າ ໃຫ້ແກ່ສັງຄົມ, ການຄົມມະນາຄົມທາງອາກາດ ແລະ ການຜະລິດກະສິກໍາ ໃຫ້ທັນເວລາ;
23. ຄົ້ນຄວ້າສ້າງ ຫຼື ປັບປຸງ ນິຕິກໍາ, ຄໍາແນະນໍາ, ກໍານົດໝາຍເຕັກນິກ ແລະ ມາດຖານຜົນຜະລິດກະສິກໍາ ເພື່ອຄຸ້ມຄອງມະຫາພາກ ດ້ານວຽກງານລວມ ຂອງຂະແໜງກະສິກໍາ ແລະ ສິ່ງແວດລ້ອມ;

24. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຕົກລົງ ກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ ບົນພື້ນຖານກົດໝາຍ ແລະ ລະບຽບການ ໃນແຕ່ລະໄລຍະ;
25. ສ້າງ ແລະ ປັບປຸງ ກົງຈັກການຈັດຕັ້ງ, ການກຳນົດຕຳແໜ່ງງານ ຂອງຂະແໜງການ ເປັນລະບົບຄົບຊຸດ ຕາມທິດກະທັດຮັດ, ມີປະສິດທິພາບ; ສ້າງ ແລະ ປັບປຸງ ແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບ; ຄຸ້ມຄອງ, ບຳລຸງ-ກໍ່ສ້າງ ສະມາຊິກພັກ, ພະນັກງານ-ລັດຖະກອນ, ພາລະກອນ; ຕີລາຄາປະເມີນຜົນ ສະມາຊິກພັກ, ພະນັກງານ-ລັດຖະກອນ, ພາລະກອນ ຢ່າງເປັນປົກກະຕິ; ປະຕິບັດນະໂຍບາຍ ແລະ ວຽກງານແຂ່ງຂັນ-ຍ້ອງຍໍ ຕໍ່ພະນັກງານ-ລັດຖະກອນ, ພາລະກອນ ຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້;
26. ສ້າງ, ຄຸ້ມຄອງ, ປັບປຸງ ແລະ ຂະຫຍາຍ ລະບົບເຄືອຂ່າຍຖານຂໍ້ມູນສະຖິຕິ ແລະ ວຽກງານຂ່າວສານ ຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ, ພັດທະນາຊົນນະບົດ; ສັງລວມບົດຮຽນຕົວແບບທີ່ດີ, ຜົນສຳເລັດຈາກການຄົ້ນຄວ້າທົດລອງ ພ້ອມທັງໂຄສະນາ, ເຜີຍແຜ່ ອອກສູ່ສັງຄົມ ຢ່າງກວ້າງຂວາງ;
27. ຄົ້ນຄວ້າ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ສົນທິສັນຍາ, ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໃນຂະແໜງກະສິກຳ ແລະ ສິ່ງແວດລ້ອມ; ເປັນກອງເລຂາໃຫ້ແກ່ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ ໃນການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການຮ່ວມມື ເພື່ອພັດທະນາອ່າງແມ່ນ້ຳຂອງ ແບບຍືນຍົງ ປີ 1995;
28. ຄຸ້ມຄອງ, ບໍລິຫານການເງິນ ແລະ ຊັບສິນ ຂອງກະຊວງ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບສັງລວມ ຕາມກົດໝາຍ ແລະ ລະບຽບການ;
29. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ-ກວດການ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດລະບຽບການ, ກົດໝາຍ, ຍຸດທະສາດ, ແຜນງານ, ແຜນການ, ໂຄງການລົງທຶນ ຂອງລັດ ຫຼື ໂຄງການທຶນກູ້ຢືມ ແລະ ຊ່ວຍເຫຼືອທາງການເພື່ອການພັດທະນາ; ຕ້ານ ແລະ ສະກັດກັ້ນ ການສໍ້ລາດບັງຫຼວງ, ແກ້ໄຂຄຳຮ້ອງ, ຄຳສະເໜີ ຂອງພົນລະເມືອງ ທີ່ຕິດພັນກັບຂະແໜງກະສິກຳ ແລະ ສິ່ງແວດລ້ອມ;
30. ປະສານສົມທົບກັບຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດໜ້າທີ່, ພາລະບົດບາດ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ ຢ່າງເປັນລະບົບຕໍ່ເນື່ອງ;
31. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ຂອບເຂດສິດ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີດັ່ງນີ້:

1. ສະເໜີປັບປຸງກົງຈັກການຈັດຕັ້ງຂອງຕົນ ຕໍ່ລັດຖະບານ, ກຳນົດຕຳແໜ່ງງານ, ບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ໃນທົ່ວຂະແໜງກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກົດໝາຍ ແລະ ລະບຽບການ ກຳນົດໄວ້ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;
2. ຊີ້ນຳ, ຄຸ້ມຄອງ ຕາມສາຍຕັ້ງ ທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດ ໃນການຕົກລົງບັນຫາ ໃຫ້ອົງການປົກຄອງທ້ອງຖິ່ນ ຢ່າງລະອຽດຈະແຈ້ງ;
3. ຕິດຕາມ, ກວດກາ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ (ດິນ, ແຮ່ທາດ, ນ້ຳ, ປ່າໄມ້, ຊີວະນາໆພັນ ແລະ ອື່ນໆ), ການພັດທະນາທີ່ດິນກະສິກຳ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃນທົ່ວປະເທດ;
4. ອອກ, ໂຈະຊົ່ວຄາວ, ຍົກເລີກ ຫຼື ຖອນໃບຢັ້ງຢືນ, ໃບອະນຸຍາດ, ໃບທະບຽນດຳເນີນກິດຈະການ ສຳລັບຜູ້ປະກອບການບໍລິການດ້ານກະສິກຳ ແລະ ສິ່ງແວດລ້ອມ ທີ່ເຄື່ອນໄຫວບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

5. ຕົກລົງແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ, ເລື່ອນຊັ້ນ, ຍ້ອງຍໍ, ປະຕິບັດວິໄນ ແລະ ປະຕິບັດນະໂຍບາຍອື່ນ ຕໍ່ ພະນັກງານຂັ້ນຕ່າງໆ ທີ່ຢູ່ໃນສິດຄຸ້ມຄອງ ຂອງຕົນ;
6. ຮຽກໂຮມພະນັກງານນໍາພາ-ຄຸ້ມຄອງ ແລະ ພະນັກງານວິຊາການ ຂອງຂະແໜງກະສິກໍາ ແລະ ສິ່ງແວດລ້ອມ ເຂົ້າຮ່ວມກອງປະຊຸມ ຫຼື ສ່ອງແສງລາຍງານວຽກງານ ເປັນແຕ່ລະໄລຍະ; ອະນຸມັດໃຫ້ບັນດາກົມກອງ ແລະ ທຽບເທົ່າ ຈັດກອງປະຊຸມ, ງານວາງສະແດງ ແລະ ຕະຫຼາດນັດ, ຝຶກອົບຮົມ, ສໍາມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນ-ຮາກຖານ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ຕາມທີ່ໄດ້ກໍານົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
7. ອອກຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານ ຂອງຂະແໜງກະສິກໍາ ແລະ ສິ່ງແວດລ້ອມ; ເຜີຍແຜ່ ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດ ຂອງຂະແໜງກະສິກໍາ ແລະ ສິ່ງແວດລ້ອມ; ໂຈະການປະຕິບັດ, ລົບລ້າງ ຫຼື ຍົກເລີກ ຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ ແລະ ແຈ້ງການ ຂອງອົງການຈັດຕັ້ງຂັ້ນລຸ່ມ ທີ່ຂື້ນກັບຂະ ແ ໜງການຕົນ;
8. ສະເໜີລັດຖະບານ ປັບປຸງ, ໂຈະການປະຕິບັດ, ລົບລ້າງ ຫຼື ຍົກເລີກ ນິຕິກໍາ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຂັດກັບກົດໝາຍ ແລະ ລະບຽບການ ຂອງຂະແໜງການຕົນ;
9. ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ກ່ຽວກັບການຮັບເອົາການຊ່ວຍເຫຼືອຕ່າງໆ ເຂົ້າໃນຂະແໜງກະສິກໍາ ແລະ ສິ່ງແວດລ້ອມ ຕາມການອະນຸມັດ ຂອງຂັ້ນເທິງ;
10. ຄຸ້ມຄອງ ແລະ ນໍາໃຊ້ ງົບປະມານ, ຊັບສິນຂອງລັດ, ການຈັດຕັ້ງປະຕິບັດ ພາລະບົດບາດ ແລະ ໜ້າທີ່ ຄວາມຮັບຜິດຊອບ ຂອງຂະແໜງກະສິກໍາ ແລະ ສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ ກໍານົດໄວ້;
11. ປະຕິບັດສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງກະຊວງກະສິກໍາ ແລະ ສິ່ງແວດລ້ອມ ປະກອບດ້ວຍ:

1. ຫ້ອງການ;
2. ກົມຈັດຕັ້ງ;
3. ກົມກວດກາ;
4. ກົມແຜນການ ແລະ ການຮ່ວມມື;
5. ກົມສົ່ງເສີມກະສິກໍາ ແລະ ສະຫະກອນ;
6. ກົມປູກຝັງ;
7. ກົມລ້ຽງສັດ ແລະ ການປະມົງ;
8. ກົມຊົນລະປະທານ;
9. ກົມປ່າໄມ້;
10. ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;

11. ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ;
12. ກົມຊັບພະຍາກອນນ້ຳ;
13. ກົມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
14. ກົມອຸຕຸນິຍົມ ແລະ ອຸທົກກະສາດ;
15. ກົມສິ່ງແວດລ້ອມ;
16. ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
17. ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີ ຊີວະພາບ;
18. ກອງເລຂາຄະນະກຳມະການແມ່ນ້ຳຂອງແຫ່ງຊາດ.

**ຫົວໜ່ວຍວິຊາການລະດັບ 2 ຂຶ້ນກັບກະຊວງ**

1. ສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊອນ-ຫ້ວຍຊື້ວ;
2. ສູນສາທິດ ແລະ ບໍລິການເຕັກນິກກະສິກຳ ຮ່ວມມື ລາວ-ຈີນ;
3. ສູນບໍລິການເຕັກນິກກະສິກຳ ແລະ ພັດທະນາຊົນນະບົດ ລາວ-ເກົາຫຼີ;
4. ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
5. ວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເໜືອ;
6. ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ;
7. ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ;
8. ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ;
9. ວິທະຍາໄລຊົນລະປະທານ ທ່າງ່ອນ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີກົງຈັກດ້ານວິຊາການຂອງຕົນຢູ່ທ້ອງຖິ່ນ ຕາມເງື່ອນໄຂຕົວຈິງຢູ່ແຕ່ລະຂັ້ນ ຕາມການຕົກລົງຂອງອົງການປົກຄອງທ້ອງຖິ່ນ ໂດຍເປັນເອກະພາບກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ຄະນະຈັດຕັ້ງສູນກາງພັກ.

**ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ**

ບຸກຄະລາກອນ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ປະກອບດ້ວຍ:

1. ລັດຖະມົນຕີ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງມະຫາພາກ ຕາມຂະແໜງການຕົນຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍລັດຖະບານ; ໃນເວລາຕິດຂັດ ລັດຖະມົນຕີ ຕ້ອງມອບສິດໃຫ້ຮອງລັດຖະມົນຕີ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ.
2. ຮອງລັດຖະມົນຕີຈຳນວນໜຶ່ງ ຊ່ວຍລັດຖະມົນຕີ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງລັດຖະມົນຕີ; ຮອງລັດຖະມົນຕີ ເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີ ຕິດຂັດ.
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກ, ຮອງຫົວໜ້າພະແນກ, ຮອງຫົວໜ້າອົງການລັດທຽບເທົ່າພະແນກ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງກະຊວງ ກະສິກຳ ແລະ ສິ່ງແວດລ້ອມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດ ປະດິດສ້າງ ຂອງພະນັກງານ-ລັດຖະກອນທຸກລະດັບ; ນຳໃຊ້ຄວາມຮູ້ຄວາມສາມາດຂອງຕົນ ຢ່າງສຸດຂີດ ເພື່ອເຮັດຫຼ້ອນໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ; ເຄົາລົບ ແລະ ປະຕິບັດ ກົດໝາຍ ແລະ ລະບຽບ ການ ຢ່າງເຂັ້ມງວດ;
3. ທຸກການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພະນັກງານ-ລັດຖະກອນ ແມ່ນ ອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍ ຂອງ ພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີ ແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານ ຢ່າງມີຈຸດສຸມ ແລະ ມີເປົ້າ ໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງ ທ້ອງ ຖິ່ນ ແນໃສ່ໝູນໃຊ້ກຳລັງແຮງ ຂອງທຸກພາກສ່ວນ ເພື່ອພັດທະນາວຽກງານກະສິກຳ ແລະ ສິ່ງແວດລ້ອມ;
2. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິ ບັດລະບອບລາຍງານ ໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີ ເປັນປົກກະຕິ;
3. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຮັບ-ຜົນ ເສຍ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງ ຢ່າງເຂັ້ມງວດ;
4. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີງົບປະມານ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວ ວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ບັນດາກົມ, ສະຖາບັນ, ສູນ, ວິທະຍາໄລ ແລະ ກົງຈັກການຈັດຕັ້ງ ຂອງທ້ອງຖິ່ນ ທີ່ຢູ່ພາຍໃຕ້ການຊີ້ນຳດ້ານວິຊາການ ທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້ ບົນພື້ນຖານ

ການແບ່ງຂັ້ນຄຸ້ມຄອງ, ມອບຄວາມຮັບຜິດຊອບຢ່າງຈະແຈ້ງ, ຣັດກຸມ ແລະ ເໝາະສົມ ໃຫ້ອົງການປົກຄອງທ້ອງຖິ່ນ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ແຂວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ນຳໃຊ້ປ່ຽນແທນ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021 ແລະ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການ ເຄື່ອນໄຫວ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**